Washington State Department of Social & Health Services
Transforming lives

# ໃບແຈ້ງການຂອງຄວາມເຂົ້າໃຈ:
## ການທວນຄືນເບິ່ງກາງເວລາອະນຸມັດ
## Statement of Understanding: Mid-Certification Review

**ເພື່ອຈະດຳເນີນຮັບເອົາການຊ່ວຍເຫລືອເງິນ ຫລື ອາຫານຕໍ່ໄປ, ທ່ານຕ້ອງເຮັດການທວນຄືນກາງຣະຍະເວລາອະນຸມັດໃຫ້ແລ້ວ.** ມັນມີຢູ່ສາມທັນທາງສໍາລັບທ່ານເພື່ອຈະເຮັດການທວນຄືນຂອງທ່ານໃຫ້ແລ້ວ:

1. ທາງໂທຣະສັບໂດຍການໂທຫາເລກ 1-877-501-2233.
2. ໂດຍການຂຽນປະກອບໃບຟອມ DSHS 14-467 ແລະ
   - ການສົ່ງທາງແຟກຊ໌ໄປຫາພວກເຮົາຢູ່ທີ່ 1-888-338-7410; ຫລື
   - ການສົ່ງໃບຟອມໄປຫາພວກເຮົາຢູ່ທີ່ PO BOX 11699, TACOMA WA 98411.
3. ໂດຍການເວົ້າເຖິງສະພາບການປັດຈຸບັນຂອງທ່ານນຳພວກເຮົາຢູ່ຫ້ອງການທ້ອງຖິ່ນ, ການເຊັນຊື່, ແລະ ການໃສ່ວັນທີໃບຟອມໃບນີ້.

**ສິ່ງທີ່ທ່ານຕ້ອງໄດ້ລາຍງານຢູ່ໃນໃບທວນຄືນກາງຣະຍະເວລາອະນຸມັດຂອງທ່ານ:**

- ການປ່ຽນແປງໃນທີ່ຢູ່ ແລະ ຄ່າບ່ອນຢູ່ອາສັຍຂອງທ່ານຢູ່ບ່ອນຢູ່ໃຫມ່.
- ການປ່ຽນແປງໃນບຸກຄົນຜູ້ທີ່ອາສັຍຢູ່ໃນຄອບຄົວຂອງທ່ານ.
- ການປ່ຽນແປງໃນຣາຍໄດ້ຂອງຄອບຄົວຂອງທ່ານຈາກ **ແຫລ່ງທີ່ມາທຸກໆບ່ອນ.** ອັນນີ້ລວມເອົາຣາຍໄດ້ຈາກການເຮັດວຽກ, ເງິນວ່າງງານ, ເງິນຄວາມປອດພັຍຂອງສັງຄົມ, ເງິນແຮງງານ ແລະ ອຸດສາຫະກັມ, ແລະ ເງິນລ້ຽງລູກ.
- ການປ່ຽນແປງໃນເງິນລ້ຽງລູກຕ່າງໆທີ່ທ່ານຖືກບັງໃຫ້ຈ່າຍຕາມກົດຫມາຍສຳລັບລູກຜູ້ທີ່ທ່ານບໍ່ໄດ້ອາສັຍຢູ່ນຳ.
- ຖ້າຫາກວ່າທ່ານບໍ່ມີລູກຢູ່ໃນເຮືອນຂອງທ່ານ, ແລະ ເວລາຊົ່ວໂມງເຮັດວຽກຂອງບຸກຄົນຜູ້ທີ່ສາມາດເຮັດວຽກລົງຕ່ຳກວ່າ 20 ຊົ່ວໂມງຕໍ່ອາທິດ.

**ຈົ່ງອ່ານຢ່າງຣະມັດຣະວັງ ແລະ ເຊັນຊື່ໃສ່ກ່ອນສົ່ງໃບຟອມໃບນີ້ກັບຄືນມາ:**

- ຂ້າພະເຈົ້າເຂົ້າໃຈວ່າກົດຣະບຽບຂອງກົມ DSHS ບັງໃຫ້ຂ້າພະເຈົ້າທີ່ຈະເຮັດການກວດທວນຄືນກາງຣະຍະເວລາອະນຸມັດອັນນີ້ໃຫ້ແລ້ວ ແລະ ບອກກົມ DSHS ກ່ຽວກັບການປ່ຽນແປງໃນສະພາບການຂອງຄອບຄົວຂອງຂ້າພະເຈົ້າໂດຍອີງຕາມກົດຫມາຍ WAC 388-418-0005 ແລະ WAC 388-418-0011.
- ຂ້າພະເຈົ້າເຂົ້າໃຈວ່າມັນເປັນອາດສະຍາກັມສຳລັບຂ້າພະເຈົ້າທີ່ຈະບອກຄວາມຂີ້ຕົວະເພື່ອຈະໄດ້ຮັບສະວັດດີການເງິນສົດ ຫລື ອາຫານ. ຂ້າພະເຈົ້າຍັງເຂົ້າໃຈອີກວ່າມັນເປັນອາດສະຍາກັມຖ້າຫາກວ່າຂ້າພະເຈົ້າບໍ່ບອກກົມ DSHS ແນວໃດແນວນຶ່ງທີ່ຂ້າພະເຈົ້າຮູ້ຈັກວ່າຂ້າພະເຈົ້າຕ້ອງໄດ້ລາຍງານ.
- ຂ້າພະເຈົ້າເຂົ້າໃຈວ່າຖ້າຫາກວ່າຂ້າພະເຈົ້າເອົາຣາຍຣະອຽດໃຫ້ຊຶ່ງຂ້າພະເຈົ້າຮູ້ຈັກວ່າຜິດ, ຂ້າພະເຈົ້າສາມາດຖືກກ່າວຫາດ້ວຍຄະດີອາດຍາ.
- ຂ້າພະເຈົ້າເຂົ້າໃຈວ່າການປັບໄຫມລົງໂທດສຳລັບການລ່ວງລະເມີດກົດຣະບຽບຂອງການຊ່ວຍເຫລືອອາຫານລວມເອົາການຖືກຫມົດສິດຈາກການຮັບເອົາການຊ່ວຍເຫລືອອາຫານ, ການປັບໄຫມ, ຫລື ການຈຳຄຸກ.
- ຂ້າພະເຈົ້າເຂົ້າໃຈວ່າຖ້າຫາກຂ້າພະເຈົ້າບໍ່ສົ່ງຫລັກຖານຂອງການປ່ຽນແປງມາໃຫ້ຊຶ່ງສາມາດເຮັດໃຫ້ການຊ່ວຍເຫລືອຂອງຂ້າພະເຈົ້າຂຶ້ນ, ກົມ DSHS ຈະບໍ່ໃຊ້ການປ່ຽນແປງເຫລົ່ານີ້ເພື່ອຈະພິຈາຣະນາເບິ່ງການຊ່ວຍເຫລືອຂອງຂ້າພະເຈົ້າ.
- ຂ້າພະເຈົ້າເຂົ້າໃຈວ່າສິ່ງທີ່ຂ້າພະເຈົ້າໄດ້ບອກກົມຢູ່ໃນໃບລາຍງານໃບນີ້ອາດຈະມີຜົນສະທ້ອນເຖິງສະວັດດີການຊ່ວຍເຫລືອຂອງຂ້າພະເຈົ້າ.
- ຂ້າພະເຈົ້າຂໍແຈ້ງວ່າພາຍໃຕ້ການປັບໄຫມລົງໂທດຂອງການເວົ້າເທັດວ່າຣາຍຣະອຽດທີ່ຂ້າພະເຈົ້າບອກກົມ DSHS ຢູ່ໃນໃບລາຍງານໃບນີ້ແມ່ນຄວາມຈິງ ແລະ ຖືກຕ້ອງອີງຕາມຄຳຮັບຮູ້ທີ່ດີທີ່ສຸດຂອງຂ້າພະເຈົ້າ.

| ລາຍເຊັນ | ວັນທີ | ຊື່ຂຽນເປັນຕົວພິມ | ເລກ ID ລູກຄ້າ |
|---|---|---|---|
| | | | |



Barcode label

02611